ໂຄງການສົ່ງເສີມໂພຊະນາການຂອງຄອບຄົວຊາວກະສິກອນເຂດເນີນສູງ

ENUFF

Enhancing Nutrition of Upland Farming Families

# ການເຮັດຝຸ່ນບົ່ມ




Schweizerische Eidgenossenschaft
Confédération suisse
Confederazione Svizzera
Confederaziun svizra

**Swiss Agency for Development and Cooperation SDC**

AGRISUD INTERNATIONAL

SNV Netherlands Development Organisation

# ການກະກຽມສະຖານທີ່



**ການຄັດເລືອກພື້ນທີ່:**

- ສະຖານທີ່ໆຈະເຮັດຝຸ່ນບົ່ມຕ້ອງຢູ່ໃກ້ກັບສວນຜັກ, ໃກ້ແຫຼ່ງນໍ້າ, ຄອກສັດ ແລະ ເປັນບ່ອນທີ່ນໍ້າບໍ່ຖ້ວມຂັງ.

**ການຈັດການສະຖານທີ່:**

- ເສຍຫຍ້າ ແລະ ປັບໜ້າດິນໃຫ້ພຽງ
- ອານາໄມ ແລະ ຂຸດຂຸມທີ່ຈະເຮັດຝຸ່ນບົ່ມ ( ກວ້າງ 1.5ມ; ຍາວ 3 - 6ມ; ເລິກ 20ຊຕມ).
- ໃຫ້ຂຸດຮ່ອງລະບາຍນໍ້າອ້ອມຂຸມຝຸ່ນບົ່ມ

# ການກະກຽມສະຖານທີ່



# ກະກຽມອຸປະກອນ ແລະ ວັດສະດຸ ສຳລັບເຮັດຝຸ່ນບົ່ມ



**ຂັ້ນຕອນ:**

- ນຳເອົາໃບພືດດິບມາຊັບ ດ້ວຍພ້າ, ແຕ່ບໍ່ຈຳເປັນໃຫ້ມຸ່ນເກີນໄປ (ໃບຫຍ້າຂີ້ຫຼົ້, ໃບຫຽ່ນ, ໃບດອກຕາເວັນປ່າ, ໃບຂີ້ເຫຼັກ, ໃບຜັກອີ່ຮຸມ)..
- ເອົາລຳກ້ວຍມາຊັບເປັນທ່ອນນ້ອຍໆ.
- ນຳເອົາໃບພືດແຫ້ງ ແລະ ເຟືອງເຂົ້າ ມາຟັກປະສົມໃຫ້ເຂົ້າກັນ.
- ເອົາຂີ້ເຖົ່າ ແລະ ມູນສັດໃສ່ຖຸໄວ້.

**ຂໍ້ມູນກ່ຽວກັບວັດສະດຸ:** ຄຸນປະໂຫຍດຂອງແຕ່ລະສ່ວນປະກອບໃນການເຮັດເປັນຝຸ່ນບົ່ມ

- ສຳລັບ **ໃບພືດແຫ້ງ ແລະ ເຟືອງ**: ເມື່ອເວລາຍ່ອຍສະຫຼາຍຕົວຈະຊ່ວຍປັບປຸງໂຄງສ້າງຂອງກອງຝຸ່ນບົ່ມ ແລະ ຈະຊ່ວຍເພີ່ມປະລິມານໃຫ້ຫຼາຍຂຶ້ນ.
- **ໃບພືດສີຂຽວ**: ເປັນຕົ້ນແມ່ນປະເພດໃບພືດຕະກຸນຖົ່ວ, ຈະຊ່ວຍໃນການເພີ່ມໄນໂຕຣເຈນໃຫ້ແກ່ຝຸ່ນບົ່ມໄດ້.
- ໄນໂຕຣເຈນແມ່ນເປັນສານອາຫານໃຫ້ແກ່ດິນ, ເຊິ່ງພືດດູດຊຶມເອົາເພື່ອບຳລຸງໃບ.
- **ລຳກ້ວຍ ແລະ ໃບ**ຂອງມັນ ເຊັ່ນດຽວກັບຂີ້ເຖົ່າ ຈະເພີ່ມທາດໂປເຕຊຽມໃຫ້ແກ່ຝຸ່ນບົ່ມ, ເຊິ່ງເປັນສານອາຫານອີກຊະນິດໜຶ່ງທີ່ຊ່ວຍໃຫ້ພືດຈະເລີນເຕີບໂຕໄວ.
- **ມູນສັດ**: ຈະເຮັດໜ້າທີ່ເປັນຕົວກະຕຸ້ນເພື່ອເລີ່ມຂະບວນການຍ່ອຍສະລາຍຂອງຝຸ່ນບົ່ມ, ເຊິ່ງຈຸລິນຂອງມັນຈະເປັນຕົວທຳງານໃນການຍ່ອຍ. ຖ້າມູນສັດແຫ້ງເກີນໄປຈຸລິນຂອງມັນອາດຈະບໍ່ສາມາດທຳງານອີກຕໍ່ໄປ, ເພາະສະນັ້ນມູນສັດສົດ ແລະ ຊຸ່ມຈຶ່ງມີປະສິດພາບດີກວ່າ.

# ກະກຽມອຸປະກອນ ແລະ ວັດສະດຸ ສຳລັບເຮັດຝຸ່ນບົ່ມ



# ການປະສົມສ່ວນປະກອບ ແລະ ການເຮັດກອງຝຸ່ນບົ່ມ

3

- ນຳເອົາທ່ອນກ້ວຍທີ່ສັບແລ້ວນັ້ນ ປູລົງພື້ນຂຸມກ່ອນ
- ປະສົມສ່ວນປະກອບວັດສະດຸທີ່ກຽມໃຫ້ເຂົ້າກັນ ດ້ວຍຊວ້ານ (ໃບພືດດິບ, ໃບພືດແຫ້ງ, ເຟືອງເຂົ້າ, ຂີ້ເຖົ່າ ແລະ ຝຸ່ນຄອກ)
- ລົງມືໃຊ້ຊວ້ານ ຕັກສ່ວນ ປະສົມແລ້ວນັ້ນໃສ່ຂຸມ ປົກເທິງທ່ອນກ້ວຍສັບແລ້ວນັ້ນ.
- ຕັກໃສ່ເປັນຊັ້ນ ທຸກໆ 20 ຫາ 30 ຊຕມ, ໃຫ້ເອົານ້ຳຫົດທຸກຄັ້ງ. ເຮັດແບບນີ້ເລື້ອຍໆຈົນກວ່າສ່ວນປະສົມຈະໝົດ.

**ເພື່ອປະເມີນຜົນ**:

ໃຫ້ຖາມຜູ້ເຂົ້າຮ່ວມ ໃນການເຮັດຝຸ່ນບົ່ມ ຕາມແຕ່ລະຂັ້ນຕອນນີ້ ທີ່ເຈົ້າໄດ້ອະທິບາຍໄປນັ້ນ ເພື່ອປະເມີນເບິ່ງວ່າເຂົາເຈົ້າເຂົ້າໃຈສ່ຳໃດ.


1
2
3
4
ການປະສົມສ່ວນປະກອບ ແລະ ການເຮັດກອງຝຸ່ນບົ່ມ

# ການແປງກອງຝຸ່ນບົ່ມ ແລະ ຂັ້ນຕອນສຸດທ້າຍ



- ແປງກອງຝຸ່ນບົ່ມໃຫ້ເປັນຮູບ ສີ່ຫຼ່ຽມຄາງໝູ.
- ໃຊ້ບົວຫົດນ້ຳໃຫ້ທົ່ວອີກເທື່ອໜຶ່ງ.
- ເອົາໃບຕອງກ້ວຍມາປົກເທິງເພື່ອປ້ອງກັນນ້ຳຝົນ ຊຶ່ງອາດຈະເຮັດໃຫ້ມີນ້ຳຫຼາຍເກີນໄປ.
- ເອົາທ່ອນໄມ້ມາປັກໄວ້ເຄິ່ງກາງຂອງກອງຝຸ່ນບົ່ມ, ໃຊ້ເພື່ອກວດກາເບິ່ງຄວາມຮ້ອນຂອງກອງຝຸ່ນ (ເພື່ອຢາກຮູ້ວ່າຝຸ່ນບົ່ມເລີ່ມມີການປະຕິກິລິຍາຍ່ອຍສະລາຍ).

# ການແປງກອງຝຸ່ນບົ່ມ ແລະ ຂັ້ນຕອນສຸດທ້າຍ



# ການກວດກາອຸນຫະພູມຂອງກອງຝຸ່ນບົ່ມ



- ພາຍຫຼັງໄດ້ 5 ມື້, ໃຫ້ຖອດເອົາໄມ້ທີ່ປັກໄວ້ເຄິ່ງກາງອອກ ແລະ ໃຊ້ມືຈັບປາຍໄມ້ລຸ່ມສຸດ ເພື່ອກວດກາເບິ່ງວ່າມັນມີຄວາມຮ້ອນ ຫຼື ບໍ່. ຖ້າມັນຮ້ອນ, ໝາຍຄວາມວ່າຝຸ່ນບົ່ມເລີ່ມການປະຕິກິລິຍາ ການບົ່ມໄດ້ດີ. ແຕ່ຖ້າບໍ່ຮ້ອນ, ໃຫ້ຫົດນ້ຳຕື່ມອີກເພື່ອຊ່ວຍໃຫ້ມັນສາມາດລິເລີ່ມການບົ່ມອີກຄັ້ງ.
- ໃຫ້ເອົາທ່ອນໄມ້ ປັກໄວ້ເຄິ່ງກາງ ກອງຝຸ່ນຄືນ.
- ແລະ ກວດກາເບິ່ງອີກຕື່ມອີກເປັນແຕ່ລະໄລຍະ.

**ໝາຍເຫດ**: ກອງຝຸ່ນບົ່ມຈະຮ້ອນຍ້ອນທາດຈຸລິນຊີຈາກມູນສັດສິດ ເຊິ່ງຊ່ວຍຂະບວນການຍ່ອຍສະຫຼາຍຂອງຝຸ່ນບົ່ມ. ເມື່ອອຸນຫະພູມໄດ້ເພີ່ມຂຶ້ນເຖິງຈຸດສູງສຸດນັ້ນ, ເຊື້ອກາຝາກ, ໄຂ່ແມງໄມ້ ແລະ ຕົວອ່ອນຕ່າງໆ ພ້ອມກັບແກ່ນຫຍ້າ ທີ່ຕິດມານຳໃບພືດຈະຕາຍ.


ການກວດກາອຸນຫະພູມຂອງກອງຝຸ່ນບົ່ມ

# ການປະສົມຝຸ່ນບົ່ມຄືນອີກຄັ້ງ



- ເມື່ອຝຸ່ນບົ່ມ ບໍ່ຮ້ອນ (ພາຍຫຼັງບົ່ມໄດ້ 10 ມື້), ໃຫ້ຄືນກອງຝຸ່ນບົ່ມຄືນຕື່ມອີກ. ໃຫ້ພະຍາຍາມເອົາຊວ້ານຕັກເອົາສ່ວນແຄມ ແລະ ສ່ວນເທິງ ມາໃສ່ເຄິ່ງກາງຄືນໃໝ່ ແລະ ເອົາສ່ວນກາງໄວ້ແຄມແທນ.
- ເອົາທ່ອນໄມ້ປັກເຄິ່ງກາງກອງຝຸ່ນບົ່ມອີກຄັ້ງ ແລະ ກວດອຸນຫະພູມເປັນປະຈຳ.
- ເຮັດຄືນຂະບວນການນີ້ ທຸກໆອາທິດ, ຈົນກວ່າຝຸ່ນບົ່ມຈະບໍ່ມີຄວາມຮ້ອນ. ເມື່ອຝຸ່ນບົ່ມ ພ້ອມຈະນຳໃຊ້ແລ້ວ, ມັນຈະມີໂຄງສ້າງດິນທີ່ດີ ແລະ ມີກິ່ນຄືກັບດິນປ່າໄມ້.

**ໝາຍເຫດ**: ເມື່ອຝຸ່ນບົ່ມພ້ອມໃຊ້ງານ, ເຮົາສາມາດບັນຈຸໃສ່ຖົງເກັບຮັກສາໄວ້ໄດ້ຫຼາຍເດືອນ ໃນພື້ນທີ່ໆບໍ່ມີຄວາມຊຸ່ມ.


ການປະສົມຝຸ່ນບົ່ມຄືນອີກຄັ້ງ

**ທ່ານໃດເປັນຜູ້ກະກຽມວັດສະດຸ ? ຜູ້ທີ່ໄດ້ຮັບຜົນປະໂຫຍດ.**

**ພວກເຮົາກະກຽມຫຍັງແດ່?**

**ອຸປະກອນ:**

1. ພ້າອີ່ໂຕ້
2. ຄຸ
3. ທ່ອນໄມ້ຍາວພໍປະມານ
4. ບົວຫົດນ້ຳ



**ວັດສະດຸສົດ:**

1. ໃບຕອງກ້ວຍ
2. ວັດສະດຸພືດແຫ້ງ: ເຟືອງເຂົ້າ, ກິ່ງກ້ານ, ໃບ
3. ວັດສະດຸພືດສົດ: (ໃບຫຍ້າຂີ້ຫູ້, ໃບທ່ຽນ, ໃບດອກຕາເວັນປ່າ, ໃບຂີ້ເຫຼັກ, ໃບຜັກອີ່ຮຸມ).
4. ລຳກ້ວຍ
5. ຂີ້ເຖົ່າ
6. ມູນສັດສົດ
7. ນ້ຳ



**ເຮົາກະກຽມວັດສະດຸ ເມື່ອໃດ?** ໜຶ່ງມື້ກ່ອນໜ້າ ຫຼື ຕອນເຊົ້າ.